ເລກທີ 048 /ທຄຮ
ນະຄອນຫຼວງວຽງຈັນ, ວັນທີ 19 ມີນາ 2026

JDB
ທະນາຄານຮ່ວມພັດທະນາ ມະຫາຊົນ

ມະຕິ
ກອງປະຊຸມສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ
ສະໄໝສາມັນ ຄັ້ງທີ I, ປະຈຳປີ 2026

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນຂອງບໍລິສັດຫຼັກຊັບ ແລະ ບໍລິສັດ ຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024;
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018;
- ອີງຕາມ ກົດລະບຽບຂອງທະນາຄານຮ່ວມພັດທະນາ ມະຫາຊົນ ສະບັບເລກທີ 064/ທຄຮ, ລົງວັນທີ 5 ມີນາ 2026.

ຜ່ານການຄົ້ນຄວ້າ ແລະ ແລກປ່ຽນຄຳເຫັນຂອງບັນດາສະມາຊິກສະພາບໍລິຫານ ຢ່າງເລິກເຊິ່ງຕໍ່ກັບແຕ່ລະວາລະຂອງກອງປະຊຸມສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ (ທຄຮ) ສະໄໝສາມັນ ຄັ້ງທີ I ປະຈຳປີ 2026 (ຕໍ່ໄປນີ້ຮຽກວ່າ: ກອງປະຊຸມ), ໄດ້ເປີດຂຶ້ນ ໃນເວລາ: 14:00 ໂມງ, ຂອງວັນທີ 19 ມີນາ 2026, ທີ່ສຳນັກງານໃຫຍ່ ທະນາຄານຮ່ວມພັດທະນາ ມະຫາຊົນ, ໂດຍການເປັນປະທານຂອງ ທ່ານ ວິໄລ ສີພະພອນ, ປະທານສະພາບໍລິຫານ ໂດຍມີສະມາຊິກສະພາບໍລິຫານ ຈຳນວນ 8 ທ່ານ ເຂົ້າຮ່ວມ (ໃນນີ້ ທ່ານ ວິລັນເດດ ໄວຍະສົມສັກ, ສະມາຊິກສະພາບໍລິຫານ ບໍ່ໄດ້ເຂົ້າຮ່ວມ ເນື່ອງຈາກຕິດພາລະກິດເດີນທາງໄປຕ່າງປະເທດ). ມີຄະນະອຳນວຍການ ແລະ ພະແນກກ່ຽວຂ້ອງ ເຂົ້າຮ່ວມ ເປັນຜູ້ສັງເກດການ.

ກອງປະຊຸມສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ ມີມະຕິຕົກລົງ ດັ່ງນີ້:

ມາດຕາ 1 ພາຍຫຼັງພິຈາລະນາແລ້ວ ເຫັນດີຮັບຮອງເປັນເອກະພາບກັນ ໃນກອງປະຊຸມສະພາບໍລິຫານ ທຄຮ ສະໄໝສາມັນ ຄັ້ງທີ I, ປະຈຳປີ 2026 ເຊິ່ງລາຍລະອຽດ ມີດັ່ງນີ້:

1) ເຫັນດີຮັບຮອງເອົາ ບົດບັນທຶກກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2024;
2) ເຫັນດີຮັບຮອງເອົາ ແຜນເພີ່ມທຶນຈົດທະບຽນໂດຍນຳໃຊ້ Share Premium;
3) ເຫັນດີຮັບຮອງເອົາ ຜົນການດຳເນີນງານ ແລະ ບົດລາຍງານຖານະການເງິນ ປະຈຳປີ 2025 ຂອງ ທຄຮ ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ທຄຮ ສະໄໝສາມັນ ປະຈຳປີ 2025 ພິຈາລະນາ ແລະ ຮັບຮອງ;
4) ເຫັນດີຮັບຮອງເອົາ ແຜນການດຳເນີນທຸລະກິດ ປີ 2026;
5) ເຫັນດີຮັບຮອງເອົາ ການລົງທຶນໃນກອງທຶນສ່ວນບຸກຄົນ;
6) ເຫັນດີຮັບຮອງເອົາ ການແຕ່ງຕັ້ງບໍລິສັດ BCEL-KT ເປັນທີ່ປຶກສາທາງດ້ານການເງິນ (FA);
7) ເຫັນດີຮັບຮອງເອົາ ການຮ່ວມທຶນສ້າງຕັ້ງ ບໍລິສັດ ລາວ ບໍລິຫານຊັບສິນ ຈຳກັດ - Lao Asset Management Company;
8) ເຫັນດີຮັບຮອງເອົາ ແຜນການຈ່າຍເງິນປັນຜົນ ປີ 2025 ຂອງ ທຄຮ;
9) ເຫັນດີຮັບຮອງເອົາ ການແຕ່ງຕັ້ງບໍລິສັດ ກວດສອບບັນຊີ ພາຍນອກ ປະຈຳປີ 2026;
10) ເຫັນດີຮັບຮອງເອົາ ການປັບປຸງໂຄງຮ່າງການຈັດຕັ້ງ ທຄຮ;
11) ເຫັນດີຮັບຮອງເອົາ ກົດລະບຽບຂອງທະນາຄານຮ່ວມພັດທະນາ ມະຫາຊົນ (ສະບັບປັບປຸງ);
12) ເຫັນດີຮັບຮອງເອົາ ແຜນຈັດກອງປະຊຸມຜູ້ຖືຮຸ້ນ ທະນາຄານຮ່ວມພັດທະນາ ມະຫາຊົນ ສະໄໝສາມັນ ປະຈຳປີ 2025 ດັ່ງນີ້:

ເລກທີ 82 ຖະໜົນ ລ້ານຊ້າງ ບ້ານຫັດສະດີ ເມືອງຈັນທະບຸລີ ນະຄອນຫຼວງວຽງຈັນ, 01000, ສປປ ລາວ ໂທ.(+856-21) 213531-6
ສາຍດ່ວນ: 1499, WEBSITE:WWW.JDBBANK.COM.LA; EMAIL:INFO@JDBBANK.COM.LA

12) ເຫັນດີຮັບຮອງເອົາ ແຜນຈັດກອງປະຊຸມຜູ້ຖືຮຸ້ນ ທະນາຄານຮ່ວມພັດທະນາ ມະຫາຊົນ ສະໄໝສາມັນ ປະຈຳ ປີ 2025 ດັ່ງນີ້:

- ມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ແລະ ສິດໄດ້ຮັບເງິນປັນຜົນ: ວັນທີ 03 ເມສາ 2026;
- ມື້ເປີດກອງປະຊຸມຜູ້ຖືຮຸ້ນ: ວັນທີ 29 ເມສາ 2026, ເວລາ: 9:00-12:00 ໂມງ;
- ມື້ຈ່າຍເງິນປັນຜົນ: ວັນທີ 25 ພຶດສະພາ 2026;
- ສະຖານທີ່ຈັດກອງປະຊຸມຜູ້ຖືຮຸ້ນ: ທະນາຄານຮ່ວມພັດທະນາ ມະຫາຊົນ, ຫ້ອງປະຊຸມໃຫຍ່ ຊັ້ນ 6;
- ວາລະກອງປະຊຸມຜູ້ຖືຮຸ້ນ:
  - **ວາລະທີ 1**: ພິຈາລະນາ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2024;
  - **ວາລະທີ 2**: ພິຈາລະນາ ແລະ ຮັບຮອງເອົາ ແຜນເພີ່ມທຶນຈົດທະບຽນໂດຍນຳໃຊ້ Share Premium;
  - **ວາລະທີ 3**: ພິຈາລະນາ ແລະ ຮັບຮອງເອົາ ຜົນການດຳເນີນງານ ແລະ ບົດລາຍງານຖານະການເງິນ ປະຈຳປີ 2025 ຂອງ ທຄຮ;
  - **ວາລະທີ 4**: ພິຈາລະນາ ແລະ ຮັບຮອງເອົາ ແຜນການດຳເນີນທຸລະກິດ ປີ 2026;
  - **ວາລະທີ 5**: ພິຈາລະນາ ແລະ ຮັບຮອງເອົາ ການລົງທຶນໃນກອງທຶນສ່ວນບຸກຄົນ;
  - **ວາລະທີ 6**: ພິຈາລະນາ ແລະ ຮັບຮອງເອົາ ການຮ່ວມທຶນສ້າງຕັ້ງບໍລິສັດ ລາວ ບໍລິຫານຊັບສິນ ຈຳກັດ (Lao Asset Management Company);
  - **ວາລະທີ 7**: ພິຈາລະນາ ແລະ ຮັບຮອງເອົາ ແຜນການຈ່າຍເງິນປັນຜົນ ປີ 2025 ຂອງ ທຄຮ;
  - **ວາລະທີ 8**: ພິຈາລະນາ ແລະ ຮັບຮອງເອົາ ການແຕ່ງຕັ້ງບໍລິສັດ ກວດສອບບັນຊີ ພາຍນອກ ປະຈຳປີ 2026;
  - **ວາລະທີ 9**: ພິຈາລະນາ ແລະ ຮັບຮອງເອົາ ການປັບປຸງໂຄງສ້າງການຈັດຕັ້ງຂອງ ທຄຮ;
  - **ວາລະທີ 10**: ພິຈາລະນາ ແລະ ຮັບຮອງເອົາກົດລະບຽບຂອງທະນາຄານຮ່ວມພັດທະນາ ມະຫາຊົນ (ສະບັບປັບປຸງ);
  - **ວາລະອື່ນໆ** (ຖ້າມີ).

ມາດຕາ 2 ການຈັດຕັ້ງປະຕິບັດ

ມອບໃຫ້ຄະນະອຳນວຍການ ທຄຮ ຈັດຕັ້ງປະຕິບັດມະຕິກອງປະຊຸມ ສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃຫ້ໄດ້ຮັບຜົນດີ.

ມາດຕາ 3 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານກອງປະຊຸມ

ທະນາຄານ ແຫ່ງ ສປປ ລາວ
ທະນາຄານ ຮ່ວມພັດທະນາ ມະຫາຊົນ
JOINT DEVELOPMENT BANK Public
ມະຫາຊົນ ຫຼວງ ວຽງຈັນ

ວິໄລ ສີພະພອນ